ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຄະນະກຳມະການ ບໍລິຫານ ອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ

ເລກທີ 0718/ກອຊ.ນທ

ນາກາຍ, ວັນທີ 01 MAR 2022

# ຂໍ້ຕົກລົງ
# ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ຈຸງານສຶກສາຄົ້ນຄວ້າ
# ແລະ ຕິດຕາມຊີວະນາໆພັນ

- ອີງຕາມ ກົດໝາຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການສ້າງຕັ້ງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ສະບັບເລກທີ 36/ນຍ, ລົງວັນທີ 15 ກຸມພາ 2020.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການ ຈັດຕັ້ງ ແລະ ເຄື່ອນໄຫວຂອງກອງຄຸ້ມຄອງອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ ສະບັບເລກທີ 0314/ກປ, ລົງວັນທີ 25 ກຸມພາ 2020.

ຫົວໜ້າ ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1: ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫລັກການ, ມາດຕະມາດຕະການ ໃນກັບການຄຸ້ມຄອງ, ປົກປັກຮັກສາ, ແລະ ພັດທະນາວຽກງານສຶກສາຄົ້ນຄ້ວາ ແລະ ຕິດຕາມຊີວະນາໆພັນ ໃນເຂດອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ, ຈຸດປະສົງເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແນໃສ່ພັດທະນາບັນດາທ່າແຮງຄວາມປົ່ມຊ້ອນທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ຄຸນລັກສະນະພິເສດ ທາງດ້ານກາຍຍະພາບ ແລະ ຊີວະພາບໃນເຂດອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ ເຮັດໃຫ້ອຸທິຍານແຫ່ງຊາດ ເປັນແຫລ່ງສຶກສາຄົ້ນຄວ້າ ແລະ ພັດທະນາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມທີ່ສຳຄັນ ສາມາດນຳໃຊ້ປະໂຫຍດເພື່ອເປັນພື້ນຖານໃຫ້ແກ່ ການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແລະ ຊອກຫາຂໍ້ມູນເພື່ອນຳມາບໍລິຫານຈັດການ ແລະ ກ້າວໄປເຖິງການສຶກສາຄົ້ນຄວ້າທາງດ້ານວິທະຍາສາດພັນພືດ ແລະ ພັນສັດ ດ້ວຍ

ການຮ່ວມມືກັບສະຖາບັນຕ່າງໆທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາຮ່ວມມືທາງດ້ານວິຊາການໃນການສຶກສາຄົ້ນຄ້ວາ, ຕະຫລອດຮອດການແກ້ໄຂບັນຫາທີ່ເກີດຂຶ້ນລະ ຫວ່າງຄົນ ແລະ ສັດປ່າ ໃນເຂດອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ.

## ມາດຕາ 2: ທີ່ຕັ້ງ ແລະ ພາລະບົດບາດ

ຈຸງານສຶກສາຄົ້ນຄວ້າ ແລະ ຕິດຕາມຊີວະນາໆພັນ ຂຽນເປັນຕົວອັກສອນຫຍໍ້ວ່າ "ໜສຕຊ", ໂດຍມີສຳນັກງານໃຫ່ຍຕັ້ງຢູ່ ບ້ານ ອຸດົມສຸກ ເມືອງ ນາກາຍ ແຂວງ ຄຳມ່ວນ, ຊື່ງຢູ່ພາຍໄຕ້ການຊີ້ ນຳທາງດ້ານວິຊາການ ຂອງ ກອຊ.ນທ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ໃຫ້ມີຄວາມຍືນຍົງ ມີພາລະບົດບາດເປັນເສນາທິການໃຫ້ແກ່ການນຳ ຂອງ ກອງຄຸມຄອງອຸທິຍານແຫ່ງຊາດນາກາຍ-ນ້ຳເທີນໃນການສຶກສາຄົ້ນຄ້ວາ, ຕິດຕາມປະເມີນຜົນຊີວະນາໆພັນ ທີ່ກຽ່ວພັນກັບຊະນິດພັນພືດ, ພັນສັດ ແລະ ທ່າແຮງດ້ານອື່ນໆ ທາງດ້ານຊັບພະຍາກອນທຳມະຊາດສິ່ງແວດລ້ອມ, ວັດທະນະທຳ ແລະ ສັງຄົມ.

# ໝວດທີ 2
# ໜ້າທີ່ ແລະ ຂອບເຂດສິດ

## ມາດຕາ 3 ໜ້າທີ່

1. ປະຕິບັດກົດໝາຍ, ດຳລັດ, ຄຳສັ່ງ ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນໆຂອງ ຂັ້ນເທິງວາງ ອອກ;
2. ປະຕິບັດວຽກງານຕາມແຜນດຳເນີນງານປະຈຳປີ ຂອງ ກອຊ.ນທ ວາງອອກໃນແຕ່ລະໄລຍະໃຫ້ມີປະສິດທິຜົນສູງ ແລະ ສຳເລັດຕາມແຜນການທີ່ວາງໃວ້;
3. ພັດທະນາແບບຟອມບັນທຶກ ແລະ ເກັບກຳຂໍ້ມູນພັນພືດ ແລະ ພັນສັດ ເພື່ອເປັນບ່ອນອີງ ໃຫ້ແກ່ການປະຕິບັດວຽດງານພາຍໃນໜ່ວຍງານ ແລະ ພາກສະໜາມ;
4. ຈັດຫາອຸປະກອນ ແລະ ເຄື່ອງມືຮັບໃຊ້ຕ່າງໆເຂົ້າໃນການສຶກສາຄົ້ນຄ້ວາໃຫ້ພຽງພໍກັບຄວາມຕ້ອງການໃນແຕ່ລະໄລຍະເພື່ອເຮັດໃຫ້ວຽກງານໄດ້ຖືກດຳເນີນຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ;
5. ກຳນົດເຂດບູລິມະສິດທີ່ມີຄວາມຫລາກຫລາຍທາງດ້ານຊີວະນາໆພັນ ເພື່ອເປັນບ່ອນດຳເນີນບ່ອນການເກັບກຳຂໍ້ມູນ, ການສຶກສາຄົ້ນຄ້ວາ ແລະ ຕິດຕາມຊີວະນາໆໃນແຕ່ລະໄລຍະ;
6. ສ້າງຫ້ອງເກັບຕົວຢ່າງຊະນິດພັນພືດ, ພັນສັດ , ຖານຂໍ້ມູນຕ່າງໆທີ່ມີຄວາມສຳຄັນທາງດ້ານວິທະຍາສາດ, ວັດທະນະທຳ,ສັງຄົມ ເພື່ອເກັບຮັກສາໄວ້ບໍ່ໃຫ້ຕົກເຮັ່ຍເສຍຫາຍ;
7. ລົງສຳຫລວດ, ເກັບກຳຂໍ້ມູນຕ່າງໆ ເຊັ່ນ: ທາງດ້ານພັນພືດ, ພັນສັດ , ຊະນິດໄມ້ທີ່ມີຄວາມໂດດເດັ່ນ ແລະ ເປັນເອກະລັກ ຂອງອຸທິຍານ, ສຳຫລວດລັກຊະນະທາງລະບົບນິເວດວິທະຍາ, ຄວາມຫລາກລາຍທາງດ້ານຊີວະພາບ ແລະ ອື່ນໆ;
8. ສຶກສາຄົ້ນຄ້ວາ,ກຳນົດເຂດດ້ານການທ່ອງທຽ່ວທາງທຳມະຊາດ, ວັດທະນະທຳປະຫວັດສາດ ແລະ ວັດຖຸບູຮານ , ຈຳນວນການເພີ່ມຂຶ້ນ ຫຼື ຫລຸດລົງ ຂອງ ນັກທ່ອງທຽ່ວ ແລະ ເຂດນຳໃຊ້ເພື່ອການສຳປະທານ;

ฟ

9. ສຶກສາຄົ້ນຄ້ວາທາງດ້ານເນື້ອທີ່, ການນຳໃຊ້ຜົນປະໂຫຍດຈາກເນື້ອທີ່, ຂໍ້ມູນພື້ນຖານທາງດ້ານພູມສາດ ແລະ ແຫລ່ງນ້ຳ;
10. ສ້າງເຄືອສະໜັບສະໜູນ ແລະ ຮ່ວມມືທາງດ້ານການສຶກສາຄົ້ນຄ້ວາ ແລະ ຕິດຕາມຊີວະນາໆພັນທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ ສະຖາບັນການສຶກສາ, ສູນຄົ້ນຄ້ວາແຫ່ງຊາດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ;
11. ເຜີຍແຜ່ຂໍ້ມູນ ແລະ ນຳເອົາຜົນຂອງການຄົ້ນຄ້ວາມານຳໃຊ້ໃຫ້ເປັນປະໂຫຍດໃຫ້ແກ່ສັງຄົມ, ສະຖາບັນການສຶກສາຕ່າງໆທັງພາຍໃນ ແລະ ຕ່າງປະເທດ;
12. ພັດທະນາສວນພຶກສາຊາດ ຂອງ ກອຊ.ນທ ໃຫ້ມີຄວາມຫລາກຫລາຍທາງດ້ານຊະນິດພັນໄມ້, ພື້ນປ່າ, ດອກໄມ້ປ່າ, ຊື່ຊະນິດພັນທາງດ້ານວິທະຍາສາດ ແລະ ຊື່ລາວ;
13. ປະສານສົມທົບກັບພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານສຶກສາຄົ້ນຄ້ວາ, ຕິດຕາມຊີວະນາໆພັນ ແລະ ຄົ້ນຄ້ວາເຖິງຄວາມເປັນໄປໄດ້ໃນການສ້າງບົດບັນທຶກຊ່ວຍຈຳ MOU ຮ່ວມກັນໃນການພັດທະນາວຽກງານດັ່ງກ່າວ;
14. ຂຶ້ນບັນຊີລາຍຊື່ຊະນິດພັນພືດ-ພັດສັດ ພາຍໃນເຂດອຸທິຍານແຫ່ງຊາດນາກາຍ-ນ້ຳເທີນ ແລະ ຊະນິດພັນສະເພາະຖິ່ນ;
15. ສະຫລຸບງານປະຈຳອາທິດ, ປະຈຳເດືອນ, ສາມເດືອນ, ຫົກເດືອນ, ເກົ້າເດືອນ ແລະ ໜຶ່ງປີໃຫ້ແກ່ການນຳ ກອຊນທ ຊາບຢ່າງເປັນປົກກະຕິ;
16. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ ແລະ ອື່ນ ໆ ທີ່ຂັ້ນເທິງມອບໝາຍໃຫ້;
17. ມີໜ້າທີ່ປະສານງານກັບແຕ່ລະເຂດ ຂອງ ກອຊ.ນທ ເພື່ອເຮັດວຽກຮ່ວມກັນຢ່າງໃກ້ສິດ, ມີຄວາມເປັນເອກະພາບກັນ;
18. ປະຕິບັດວຽກງານອື່ນໆຕາມການມອບໝາຍ ຂອງ ການນຳ ກອຊ.ນທ.

ມາດຕາ 4 ຂອບເຂດສິດ

1. ສະເໜີຕໍ່ຫົວໜ້າ ແລະ ຄະນະ ກອຊ.ນທ ກ່ຽວກັບການປັບປຸງການຈັດຕັ້ງ ຂອງ ຕົນເຊັ່ນ: ການກຳນົດຕຳ ແໜ່ງງານ, ການບັນຈຸຊັບຊ້ອນ ແລະ ການຈັດວາງບຸກຄະລະກອນພາຍໃນໜ່ວຍງານຂອງຕົນ;
2. ສະເໜີປະຕິບັດນະໂຍບາຍ ເລື່ອນຊັ້ນ-ເລື່ອນຂັ້ນເງິນເດືອນ, ຍ້ອງຍໍ ແລະ ປະຕິບັດວິໃນຕໍ່ພະນັກງານລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
3. ຕິດຕໍ່ພົວພັນປະສານກັບອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອໄກ່ເກ່ຍ ແລະ ແກ້ໄຂປະກົດການຍໍ້ທໍ້ທີ່ເກີດຂຶ້ນພາຍໃນຄວາມຮັບຜິດຊອບຂອງຕົນ;
4. ຕິດຕໍ່, ພົວພັນ, ປະສານສົມທົບ ແລະ ແລກປ່ຽນ ຂໍ້ມູນ-ຂ່າວສານກັບພາກສ່ວນທີ່ກ່ຽວຂ້ອງຕໍ່ກັບວຽກງານຂອງຕົນທາງດ້ານການສຶກສາຄົ້ນຄ້ວາ ແລະ ອື່ນໆຕາມການມອບໝາຍ ຂອງ ກອຊ.ນທ;
5. ຈັດຕັ້ງ ແລະ ຮຽກໂຮມພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານວຽກແຕ່ລະໄລຍະ, ເຂົ້າຮ່ວມການວາງສະແດງ, ເຂົ້າຮ່ວມສຳມະນາ, ຝຶກອົບຮົມ, ເຂົ້າຮ່ວມທັດສະນະສຶກສາໄລຍະ

ສັ້ນ, ໄລຍະກາງ ແລະ ໄລຍະຍາວ ທັງພາຍໃນ ແລະ ຕ່າງປະເທດຕາມການແຕ່ງຕັ້ງ ຫຼື ມອບໝາຍ ຂອງ ກອຊ.ນທ;

6. ຄົ້ນຄ້ວານຳສະເໜີທັດສະນະທາງດ້ານວິຊາການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ແກ່ ກອຊນທ ມີຄຳເຫັນ ແລະ ພິຈາລະນາ;
7. ສະເໜີຂໍນຳໃຊ້, ຄຸ້ມຄອງ, ແລະ ນຳໃຊ້ງົບປະມານ, ອຸປະກອນຮັບໃຊ້ຫ້ອງການ, ພາຫານະ, ຊັບສິນຂອງລັດທີ່ການຈັດຕັ້ງມອບໝາຍໃຫ້ ເຂົ້າໃນການດຳເນີນກິດຈະກຳຕ່າງໆ;
8. ປະຕິບັດສິດອື່ນໆຕາມການມອບໝາຍ ຂອງ ຄະນະກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບການຈັດຕັ້ງ

ກົງຈັກການຈັດຕັ້ງປະກອບດ້ວຍ:

1. ໜ່ວຍສຶກສາຄົ້ນຄວ້າ ແລະ ຕິດຕາມຊີວະນາໆພັນ;
2. ໜ່ວຍສຳຫຼວດພາກສະໜາມ-ເກັບຂໍ້ມູນ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

1. ຫົວໜ້າຈຸງານສຶກສາຄົ້ນຄ້ວາ ແລະ ຕິດຕາມຊີວະນາພັນ (1 )
2. ຈຸງານສຳຫລວດພາກສະໜາມ, ເກັບກຳຂໍ້ມູນທາງດ້ານພັນພືດ ແລະ ພັນສັດ (1)

## ໝວດທີ 4
## ໜ້າທີ່ ຂອງ ຈຸງານສຶກສາຄົ້ນຄ້ວາ ແລະ ຕິດຕາມ ຊີວະນາໆພັນ

### ມາດຕາ 7. ຫົວໜ້າ ຈຸງານສຶກສາຄົ້ນຄ້ວາ ແລະ ຕິດຕາມຊີວະນາໆພັນ

1. ປະຕິບັດວຽກງານຕາມແຜນດຳເນີນງານປະຈຳປີ ຂອງ ກອຊ.ນທ ວາງອອກໃນແຕ່ລະໄລຍະໃຫ້ມີປະສິດທິຜົນສູງ ແລະ ສຳເລັດຕາມແຜນການທີ່ວາງໄວ້;
2. ພັດທະນາແບບຟອມບັນທຶກ ແລະ ເກັບກຳຂໍ້ມູນພັນພືດ ແລະ ພັນສັດ ເພື່ອເປັນບ່ອນອີງ ໃຫ້ແກ່ການປະຕິບັດວຽກງານພາຍໃນໜ່ວຍງານ ແລະ ພາກສະໜາມ;
3. ຈັດຫາອຸປະກອນ ແລະ ເຄື່ອງມືຮັບໃຊ້ຕ່າງໆເຂົ້າໃນການສຶກສາຄົ້ນຄ້ວາໃຫ້ພຽງພໍກັບຄວາມຕ້ອງການໃນແຕ່ລະໄລຍະເພື່ອເຮັດໃຫ້ວຽກງານໄດ້ຖືກດຳເນີນຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ;

ຟ

4. ກຳນົດເຂດບູລິມະສິດທີ່ມີຄວາມຫລາກຫລາຍທາງດ້ານຊີວະນາໆພັນ ເພື່ອເປັນບ່ອນດຳເນີນບ່ອນການເກັບກຳຂໍ້ມູນ, ການສຶກສາຄົ້ນຄ້ວາ ແລະ ຕິດຕາມຊີວະນາໆໃນແຕ່ລະໄລຍະຢູ່ໃນເຂດອຸທິຍານແຫ່ງຊາດນາກາຍນໍ້າເທີນ;

5. ສ້າງຫ້ອງເກັບຕົວຢ່າງຊະນິດພັນພືດ, ພັນສັດ , ຖານຂໍ້ມູນຕ່າງໆທີ່ມີຄວາມສຳຄັນທາງດ້ານວິທະຍາສາດ, ວັດທະນະທຳ, ສັງຄົມ ເພື່ອເກັບຮັກສາໄວ້ບໍ່ໃຫ້ຕົກເຮັ່ຍເສຍຫາຍ;

6. ລົງສຳຫລວດ, ເກັບກຳຂໍ້ມູນຕ່າງໆ ເຊັ່ນ: ທາງດ້ານພັນພືດ, ພັນສັດ , ຊະນິດໄມ້ທີ່ມີຄວາມໂດດເດັ່ນ ແລະ ເປັນເອກະລັກ ຂອງອຸທິຍານ, ສຳຫລວດລັກຊະນະທາງລະບົບນິເວດວິທະຍາ, ຄວາມຫລາກລາຍທາງດ້ານຊີວະພາບ ແລະ ອື່ນໆ;

7. ສຶກສາຄົ້ນຄ້ວາ,ກຳນົດເຂດດ້ານການທ່ອງທ່ຽວທາງທຳມະຊາດ, ວັດທະນະທຳປະຫວັດສາດ ແລະ ວັດຖຸບູຮານ , ຈຳນວນການເພີ່ມຂຶ້ນ ຫຼື ຫລຸດລົງ ຂອງ ນັກທ່ອງທ່ຽວ ແລະ ເຂດນຳໃຊ້ເພື່ອການສຳປະທານ;

8. ສຶກສາຄົ້ນຄ້ວາທາງດ້ານເນື້ອທີ່, ການນຳໃຊ້ຜົນປະໂຫຍດຈາກເນື້ອທີ່, ຂໍ້ມູນພື້ນຖານທາງດ້ານພູມສາດ ແລະ ແຫລ່ງນໍ້າ;

9. ສ້າງເຄືອສະໜັບສະໜູນ ແລະ ຮ່ວມມືທາງດ້ານການສຶກສາຄົ້ນຄ້າວ ແລະ ຕິດຕາມຊີວະນາໆພັນທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ ສະຖາບັນການສຶກສາ, ສູນຄົ້ນຄ້ວາແຫ່ງຊາດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ;

10. ໄປຖອດຖອນບົດຮຽນຈາກພາກສ່ວນຕ່າງໆທີ່ປະສົບການດ້ານການສຶກສາຄົ້ນຄ້ວາເພື່ອນຳເອົາເຕັກໂນຊີອັນໃຫ່ມເຂົ້າມາພັດທະນາໃນເຂດອຸທິຍານແຫ່ງຊາດນາການ-ນໍ້າເທີນ;

11. ເຜີຍແຜ່ຂໍ້ມູນ ແລະ ນຳເອົາຜົນຂອງການຄົ້ນຄ້ວາມານຳໃຊ້ໃຫ້ເປັນປະໂຫຍດໃຫ້ແກ່ສັງຄົມ, ສະຖາບັນການສຶກສາຕ່າງໆທັງພາຍໃນ ແລະ ຕ່າງປະເທດ;

12. ພັດທະນາສວນພຶກສາຊາດ ຂອງ ກອຊ.ນທ ໃຫ້ມີຄວາມຫລາກຫລາຍທາງດ້ານຊະນິດພັນໄມ້, ພື້ນປ່າ, ດອກໄມ້ປ່າ, ຊື່ຊະນິດພັນທາງດ້ານວິທະຍາສາດ ແລະ ຊືລາວ;

13. ປະສານສົມທົບກັບພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານສຶກສາຄົ້ນຄ້ວາ, ຕິດຕາມຊີວະນາໆພັນ ແລະ ຄົ້ນຄ້ວາເຖິງຄວາມເປັນໄປໄດ້ໃນການສ້າງບົດບັນທຶກຊ່ວຍຈຳ MOU ຮ່ວມກັນໃນການພັດທະນາວຽກງານດັ່ງກ່າວ;

14. ຂຶ້ນບັນຊີລາຍຊື່ຊະນິດພັນພືດ-ພັດສັດ ພາຍໃນເຂດອຸທິຍານແຫ່ງຊາດນາກາຍ-ນໍ້າເທີນ ແລະ ຊະນິດພັນສະເພາະຖິ່ນ;

15. ສ້າງແຜນການ-ງົບປະມານ ແລະ ສ້າງບົດສະຫລຸບງານປະຈຳອາທິດ, ປະຈຳເດືອນ, ໄຕມາດ, ຫົກເດືອນ, ປະຈຳປີໃຫ້ແກ່ການຳ ກອຊ.ນທ ຊາບຢ່າງເປັນປົກກະຕິ;

16. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ ແລະ ອື່ນ ໆ ທີ່ຂັ້ນເທິງມອບໝາຍໃຫ້;

17. ມີໜ້າທີ່ປະສານງານກັບແຕ່ລະເຂດ ຂອງ ກອຊ.ນທ ເພື່ອເຮັດວຽກຮ່ວມກັນຢ່າງໃກ້ສິດ, ມີຄວາມເປັນເອກະພາບກັນ;

18. ປະຕິບັດວຽກງານອື່ນໆຕາມການມອບໝາຍ ຂອງ ການນຳ ກອຊ.ນທ.

ມາດຕາ 8 ຈຸງານສຳຫລວດພາກສະໜາມ, ເກັບກຳຂໍ້ມູນພັນພືດ ແລະ ພັນສັດ

1. ສ້າງແບບຟອມ ແລະ ກະກຽມເອກະສານບັນທຶກຂໍ້ມູນ ແລະ ອຸປະກອນຮັບໃຊ້ຕ່າງໆໃຫ້ລະອຽດຄົບຖ້ວນ ແລະ ຝຶກອົບຮົມວິທີການ ແລະ ຮູບແບບໃນການສຳຫລວດພັນພືດ ແລະ ພັນສັດໃຫ້ແກ່ທີມງານກ່ອນການລົງສຳຫລວດ ແລະ ສຶກສາຄົ້ນຄ້ວາຢູ່ພາກສະໜາມ;
2. ລົງສຳຫລວດກຳນົດເຂດບູລິມະສິດໃນການສຶກສາຄົ້ນຄ້ວາພັນສັດ ເຊັ່ນ ຊະນິດສັດທີ່ເປັນເອກະລັກຂອງອຸທິຍານແຫ່ງຊາດ, ສັດທີ່ໃກ້ຈະສູນພັນ, ສັດເຄິ່ງບົກ-ເຄິ່ງນ້ຳ, ສັດນ້ຳ, ສັດເລືອຄານ, ສັດລຽ້ງລູກດ້ວຍນ້ຳນົມ, ຊະນິດພັນສັດປີກ, ແລະ ອື່ນໆ;
3. ລົງຕິດຕັ້ງກ້ອງເພື່ອຕິດຕາມການເພີ່ມຂຶ້ນ ຫຼື ຫລຸດລົງ ຂອງ ປະຊາກອນສັດທຸກຊະນິດ ພ້ອມທັງຕິດຕາມການເຄື່ອນຍ້າຍໄປມາ ແລະ ຖິ່ນກຳເນີດຂອງສັດປ່າ;
4. ສ້າງປຸງທຽມຕາມຈຸດຕ່າງໆທີ່ເຫັນມີຄວາມເໝາະສົມ ເພື່ອເປັນບ່ອນດຶງດູດເອົາສັດປ່າມາ ແລະ ສາມາດໃຫ້ນັດທ່ອງທ່ຽວໄປເບິ່ງໄດ້ຕາມກຳນົດເວລາ;
5. ຕິດປ້າຍຫວງຫ້າມຕ່າງໆໃນເຂດອະນຸລັກສະເພາະ ແລະ ເຂດທີ່ມີຄວາມສ່ຽງຂອງສັດປ່າປະ ເພດລ່າເຫຍື່ອເປັນອາຫານ ເພື່ອປ້ອງກັນບໍ່ໃຫ້ຄົນເຂົ້າ;
6. ລາຍງານການເພີ່ມຂຶ້ນ ຫຼື ຫລຸດລົງຂອງປະຊາກອນສັດນ້ຳ ແລະ ສັດປ່າໃນແຕ່ລະໄລຍະໃຫ້ ກອຊນທ ຊາບ;
7. ຂຶ້ນແຜນງົບປະມານມາຮັບໃຊ້ວຽກງານພາຍໃນຈຸງານໃຫ້ຄົບຖ້ວນພຽງພໍ;
8. ລາຍງານຄວາມຄືບໜ້າໃນການສຶກສາຄົ້ນຄ້ວາໃຫ້ ກອຊ.ນທ ຊາບເປັນປົກະຕິ.

## ໝວດທີ 5

## ຫລັກການ ແລະ ແບບແຜນວິທີເຮັດວຽກ

ມາດຕາ 9 ຫລັກການ

1. ປະຕິບັດຫລັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ ກ່ຽວກັບ ບັນຫາລວມ ຂອງ ໜ່ວຍງານ;
2. ປະຕິບັດລະບອບຫົວໜ້າດຽວຕາມລະບົບການແບ່ງຂັ້ນຄຸ້ມຄອງ ບົນພື້ນຖານການແບ່ງງານໃຫ້ບຸກຄົນຢ່າງຈະແຈ້ງ ແລະ ສິດໃນການຕັດສິນບັນຫາໃນຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງເສີມຂະຫຍາຍຫົວຄິດປະດິດສ້າງ ຂອງ ພະ ນັກງານລັດຖະກອນທຸກລະດັບ, ນຳໃຊ້ຄວາມຮູ້ຄວາມສາມາດຂອງຕົນຢ່າງສຸດຂີດ ເພື່ອເຮັດຫລ້ອນໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ, ເຄົາລົບ ແລະ ປະຕິບັດກົດໝາຍ, ລະບຽບການຢ່າງເຂັ້ມງວດ;
3. ທຸກການເຄື່ອນໄຫວ ຂອງ ໜ່ວຍງງານສຶກສາຄົ້ນຄ້ວາ ແລະ ຕິດຕາມຊີວະນາໆພັນ ແມ່ນໃຫ້ປະຕິບັກຕາມລະບຽບການ, ຫລັກ ການ ແລະ ແຜນດຳເນີນ ງານປະຈຳປີ, 5ປີ ຂອງ ກອຊ.ນທ ຢ່າງເຂັ້ມງວດ.

ມາດຕາ 10. ແບບແຜນວິທີເຮັດວຽກ

1. ເຮັດວຽກມີແຜນການ, ແຜນງານລະອຽດ, ແກ້ໄຂວຽກຢ່າງມີຈຸດສຸມ ແລະ ເປົ້າໝາຍໃນແຕ່ລະໄລຍະ ປະສານກັບຂະແໜງການອື່ນໆທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນຢ່າງແໜ້ນແຟ້ນ ແນ່ໃສ່ໜູນໃຊ້ກໍາລັງແຮງສັງລວມ ຂອງ ທຸກພາກສ່ວນ ເພື່ອພັດທະນາວຽກສຶກສາຄົ້ນຄ້ວາ ແລະ ຕິດຕາມຊີວະນາໆພັນ ໃຫ້ມີຄວາມສົມບູນ ແລະ ຮັ່ງມີຂຶ້ນ ຕິດພັນກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາເຂດອຸທິຍານແຫ່ງຊາດນາກາຍ-ນໍ້າເທີນ ໃຫ້ມມີຄວາມຍືນຍົງທາງດ້ານຊັບພະຍາກອນປ່າໄມ້ ແລະ ສັດນໍ້າ-ສັດປ່າ ຕາມທິດສີຂຽວທີ່ໄດ້ກໍານົດໄວ້;
2. ຫົວໜ້າໜ່ວຍງານມີຄວາມຮັບຜິດຊອບໂດຍກົງຕໍ່ການນໍາ ຂອງ ກອຊ.ນທ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກພ່ອງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງ ຕົນ, ຫົວໜ້າຈຸງານມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການແບ່ງງານ ແລະ ມອບຽາຍຂອງຫົວໜ້າໜ່ວຍງານ;
3. ຫົວໜ້າໜ່ວຍງານເປັນຜູ້ມີຄໍາເຫັນຕໍ່ບັນດາເອກະສານທັງໝົດ ແລະ ລົງລາຍເຊັນຕໍ່ເອກະສານສໍາຄັນ, ກໍລະນີຕິດຂັດ ຫຼື ໄປເຄື່ອນໄຫວວຽກງານທາງລັດຖະການ ຕ້ອງມອບສິດຊົ່ວຄາວໃຫ້ແກ່ຜູ້ຊ່ວຍວຽກງານຮັກສາການແທນ, ເວລາຫົວໜ້າໜ່ວຍງານມາປະຈໍາການແລ້ວຜູ້ຮັກສາການແທນຕ້ອງລາຍງານວຽກທີ່ຕົນໄດ້ແກ້ໄຂ ແລະ ວຽກຄ້າງຄາໃຫ້ຫົວໜ້າໜ່ວຍງານຊາບພາຍໃນ 1 ວັນທາງລັດຖະການ;
4. ພົວພັນ ແລະ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດວຽກງານໃຫ້ສໍາເລັດຜົນຕາມເປົ້າໝາຍທີ່ໄດ້ກໍານົດໄວ້;
5. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫລຸບ ແລະ ຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ ແລະ ຜົນເສຍຫາຍ ພ້ອມທັງປະຕິບັດລະບອບລາຍງານ ສ່ອງແສງຢ່າງເຂັ້ມງວດ;
6. ປະຕິບັດລະບອບປະຊຸມ, ສອງແສງ, ລາຍງານປະຈໍາອາທິດ, ປະຈໍາ 3ເດືອນ, 6ເດືອນ, 9ເດືອນ ແລະ ປະຈໍາປີ ຫຼື ກອງປະຊຸມວິຊາການຢ່າງເຂັ້ມງວດ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 11. ງົບປະມານ,ເຄື່ອງແບບ, ຕາປະທັບ

ແມ່ນນໍາໃຊ້ງົບປະມານ, ເຄື່ອງແບບ ແລະ ກາປະທັບ ຂອງ ກອງຄຸ້ມຄອງອຸທິຍານແຫ່ງຊາດນາກາຍ-ນໍ້າເທີນ ເຂົ້າໃນການເຄື່ອນໄຫວວຽກງານ ທາງລັດຖະການຕາມລະບຽບທີ່ໄດ້ກໍານົດໄວ້.

### ມາດຕາ 12. ການຜັນຂະຫຍາຍ.

ມອບໃຫ້ ຫົວໜ້າຈຸງານ ເປັນຜູ້ກໍານົດ ກ່ຽວກັບພາລະບົດບາດ, ໜ້າ ທີ່ ແລະ ຂອບເຂດສິດ ຂອງ ບັນດາຈຸງານວິຊາການທີ່ຂຶ້ນກັບໜ່ວຍງານ, ພ້ອມທັງຜັນຂະຫຍາຍເນື້ອໃນ ຕາມຂໍ້ຕົກລົງ ສະບັບນີ້ ໃຫ້ລະອຽດ,ຈະແຈ້ງ, ຄົບຖ້ວນ ແລະ ຮັດກຸມ ເພື່ອ ຮັບປະກັນການປະຕິບັດວຽກງານ ຂອງຈຸງານຕົນໃຫ້ໄດ້ຮັບຜົນດີ.

ມາດຕາ 13. ການຈັດຕັ້ງປະຕິບັດ

ມອບໃຫ້ໜ່ວຍງານສຶກສາຄົ້ນຄ້ວາ ແລະ ຕິດຕາມຊີວະນາໆພັນ ນໍາໄປພົນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ມີ ປະສິດທິຜົນສູງ.

ມາດຕາ 14. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າ ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ

ຊູໄຫ ວົງສາ

ບ່ອນສົ່ງ:

- ຄະນະ ກອຊ.ນທ ເພື່ອຊາບ 1 ສະບັບ
- ຫົວໜ້າຈຸງານ ແລະ ຫ້ອງການເຂດ, ສາຂາ 1 ສະບັບ
- ພະນັກງານພາຍໃນໜ່ວຍງານ 1 ສະບັບ
- ເກັບມ້ຽນ 1 ສະບັບ